ທະນາຄານແຫ່ງ ສປປ ລາວ

ທະນາຄານພັດທະນາອາຊີ

# ໂຄງການສົ່ງເສີມການເງິນຈຸລະພາກເພື່ອຫຼຸດຜ່ອນຄວາມທຸກຍາກ

(JFPR 9095)

ວຽງຈັນ, ວັນທີ 11 ທັນວາ 2008

ເຖິງ: ບັນດາອົງກອນຜູ້ດຳເນີນວຽກງານການເງິນຈຸລະພາກ ແລະ ສະມາຊິກຂອງກຸ່ມການເງິນຈຸລະພາກ,

ທຫລ-ທພອ ‘ໂຄງການສົ່ງເສີມການເງິນຈຸລະພາກເພື່ອຫຼຸດຜ່ອນຄວາມທຸກຍາກ’ ເລີ້ມເປີດຮັບສະໝັກຂໍທຶນຊ່ວຍເຫຼືອລ້າຮອບທີ 2 ແລະ ມີຄວາມຍິນດີແຈ້ງໃຫ້ສະຖາບັນການເງິນຈຸລະພາກ ແລະສະຫະກອນສິນເຊື່ອເພື່ອຊາບ ແລະຍື່ນສະເໜີຂໍທຶນດັ່ງກ່າວໄດ້.

ກະລຸນາເບິ່ງເອກະສານທີ່ຄັດຕິດ ທີ່ມີທັງສະບັບພາສາລາວ ແລະ ພາສາອັງກິດ, ພ້ອມກັບບາງຂໍ້ມູນຫຍໍ້ກ່ຽວກັບໂຄງການ ແລະເງື່ອນໄຂຕ່າງໆໃນການໄດ້ຮັບທຶນຊ່ວຍເຫຼືອລ້າ ແລະຍັງມີຂໍ້ມູນເພີ້ມເຕີມກ່ຽວກັບຂັ້ນຕອນການໃຫ້ທຶນດັ່ງກ່າວ. ໃນຊຸດເອກະສານນີ້ລວມມີແບບຟອມສະເໜີຂໍທຶນ ແລະແຜນທຸລະກິດຂອງສະຖາບັນການເງິນຈຸລະພາກ.

ຖ້າຕ້ອງການຂໍ້ມູນເພີ້ມເຕີມ ແລະຄຳຖາມຕ່າງໆກ່ຽວກັບການສະເໜີຂໍທຶນ, ກະລຸນາຈະຕິດຕໍ່ສອບຖາມກັບໂຄງການ. ທີມງານໂຄງການຍິນດີທີ່ໃຫ້ຄຳແນະນຳແກ່ຜູ້ທີ່ສົນໃຈໃນການປະກອບເອກະສານສຳນວນສະເໜີຂໍທຶນຊ່ວຍເຫຼືອລ້າໄດ້ຢ່າງສົມບູນ. **ມື້ປິດຮັບສະເໜີຂໍທຶນຊ່ວຍເຫຼືອລ້າແມ່ນວັນທີ 28 ເດືອນ ກຸມພາ 2009** (ລວມທັງເອກະສານເພີ້ມເຕີມຕ່າງໆ).

ພວກເຮົາຫວັງຢ່າງຍິ່ງວ່າ ຈະໄດ້ຮັບຄວາມສົນໃຈຈາກທ່ານ.

ດ້ວຍຄວາມນັບຖື,

ເອີຊູຣາ ແຮັມເມີຣິດຈ

ຜູ້ປະສານງານໂຄງການ

ໂຄງການສົ່ງເສີມການເງິນຈຸລະພາກ ເພື່ອຫຼຸດຜ່ອນຄວາມທຸກຍາກ

ທະນາຄານ ແຫ່ງ ສ.ປ.ປ ລາວ – ທະນາຄານ ພັດທະນາອາຊີ

ຕູ້ໄປສະນີ 40 30, ນະຄອນຫຼວງວຽງຈັນ